# ALIFOLATE

**Generic name:** Folic acid tablets
**Brand Name:** ALIFOLATE
**Composition**: Folic acid……….5mg

**Indications:**

- Treatment of various causes of folic acid deficiency.
- Preventive medication for pregnant and lactating women
- Folic acid deficiency caused by chronic hemolytic anemia

**Dosage:**

- Adults: 5-10mg (1-2 tablets) or 15-30mg (3-6 tablets) once daily, until blood count returns to normal.
- Children: 5mg (1 tablet) per dose, 3 times daily, until blood count returns to normal.
- Pregnant women for the prevention of neural tube defects (spina bifida): 5mg once a day while planning pregnancy and three months after pregnancy.

**Contraindications:**

- Individuals who are allergic to this product.
- Megaloblastic anemia caused by vitamin $B_{12}$ deficiency cannot be treated with folic acid alone.

**Warning:**

- Oral administration of large doses of folic acid can affect the absorption of zinc.
- High doses of folic acid can antagonize the anti-epileptic effects of phenobarbital, phenytoin sodium, and propafenone.
- Nutritional megaloblastic anemia often accompanies iron deficiency, and iron, protein, and other B vitamins should be supplemented simultaneously.

**Adverse Effects:**

Adverse reactions are rare. Long term use can cause gastrointestinal symptoms such as anorexia, nausea, and bloating. Large doses of folic acid may darken urine.

**Dosage form:** pale yellow tablet

**Expiry date**: 24 months from the date of manufacture

**Packaging:** 10 tablets per blister pack, 20 blister packs per box.

**Storage:**

- Keep in original packaging in a dark, dry place.
- Please keep out of reach of children.

**Manufactured by:**

Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ

## ALIFOLATE

**ຊື່ທົ່ວໄປ:** Folic acid tablets
**ຊື່ຜະລິດຕະພັນ:** ALIFOLATE
**ສ່ວນປະກອບ**: Folic acid……….5mg
**ຂໍ້ບົ່ງໃຊ້:**
- ໃຊ້ປິ່ນປົວ ອາການພະຍາດເລືອດຈາງ ທີ່ມີສາເຫດມາຈາກ Folic acid ບໍ່ພຽງພໍ.
- ໃຊ້ປ້ອງກັນພະຍາດເລືອດຈາງ ໃນແມ່ຍິງຖືພາ ແລະ ແມ່ຍິງທີ່ລ້ຽງລູກດ້ວຍນ້ຳນົມແມ່.
- ໃຊ້ປິ່ນປົວການຂາດ Folic acid ທີ່ເກີດຈາກພະຍາດເລືອດຈາງຈາກເມັດເລືອດແດງແຕກຊຳເຮື້ອ.

**ວິທີໃຊ້:**
- ຜູ້ໃຫຍ່: ກິນໃນປະລິມານ 5-10mg (1-2 ເມັດ) ຕໍ່ຄັ້ງ, ກິນ 3 ຄັ້ງ ຕໍ່ວັນ. ຈົນກວ່າປະລິມານເມັດເລືອດຈະກັບຄືນສູ່ສະພາບປົກກະຕິ.
- ເດັກນ້ອຍ: ໃຫ້ກິນໃນປະລິມານ 5mg (1 ເມັດ) ແຕ່ລະຄັ້ງ, ກິນ 3 ຄັ້ງ ຕໍ່ວັນ (ໃນປະລິມານ 5-15mg ຕໍ່ວັນ, ແບ່ງເປັນ 3 ເທື່ອ).
- ໃນແມ່ຍິງໄວຈະເລີນພັນ ກ່ອນການວາງແຜນຄອບຄົວ ກິນກ່ອນ ຢ່າງໜ້ອຍ 1 ເດືອນ ແລະ ໃຫ້ກິນຢ່າງຕໍ່ເນື່ອງ ໃນໄລຍະຖືພາ ເພາະສາມາດຊ່ວຍປ້ອງກັນການພິການຂອງເດັກແຕ່ກຳເນີດ ລວມທັງປ້ອງກັນ ພະຍາດທາງສະໝອງ ແລະ ສັນຫຼັງໄດ້.

**ຂໍ້ຫ້າມໃຊ້:**
- ຫ້າມນຳໃຊ້ໃນຜູ້ທີ່ແພ້ຢານີ້.
- ພະຍາດເລືອດຈາງປະເພດ Megaloblastic ທີ່ເກີດຈາກການຂາດວິຕະມິນ B12 ທີ່ບໍ່ສາມາດຮັກສາໄດ້ດ້ວຍ Folic acid ພຽງຢ່າງດຽວ.

**ຄຳເຕືອນ:**
- ການນຳໃຊ້ Folic acid ໃນປະລິມານເກີນຄວາມຈຳເປັນ ສາມາດ ເຮັດໃຫ້ການດູດຊຶມ ບາງສານ ເຄມີ ໃນຮ່າງກາຍມີບັນຫາໄດ້ ເຊັ່ນ: ສານສັງກະສີ (Zinc).
- ການໃຫ້ປະລິມານ Folic acid ສູງ ສາມາດເປັນຜົນປະຕິປັກຕໍ່ຢາຕ້ານບ້າໝູໄດ້ໃນບາງກຸ່ມ ເຊັ່ນ: Phenobarbital, Phenytoin sodium and Propafenone.
- ພະຍາດເລືອດຈາງສ່ວນໃຫຍ່ ຈະຕາມມາດ້ວຍ ການຂາດສານເກືອແຮ່ ແລະ ວິຕາມິນຕ່າງໆ ດັ່ງນັ້ນ ຄວນມີການບຳລຸງ ທາງໂພສະນາການຢ່າງຕໍ່ເນື່ອງຕື່ມ ເຊັ່ນ: ທາດເຫຼັກ, ໂປຼຕີນ, ບັນດາ ວິຕາມິນກຸ່ມ B ເປັນຕົ້ນ.

**ຜົນຂ້າງຄຽງ:**
ຜົນຂ້າງຄຽງໃນການນຳໃຊ້ບໍ່ຄ່ອຍພົບ, ແຕ່ການນຳໃຊ້ຢາ ເປັນເວລານານ ແລະ ເກີນປະລິມານ ຈະພົບເຫັນອາການເຫຼົ່ານີ້ ເຊັ່ນ: ຮູ້ສຶກມຶນ, ຊາ ຫຼື ຄັນ ຕາມຮ່າງກາຍ, ເຈັບປວດບໍລິເວນປາກ ແລະ ລີ້ນ, ບໍ່ມີແຮງ, ສັບສົນມຶນງົງ, ກະວົນກະວາຍ ບໍ່ມີສະມາທິ, ມີອາການຜິດປົກກະຕິທາງກະເພາະລຳໄສ້, ປັດສະວະ ປ່ຽນສີ.

**ຮູບແບບຂອງຢາ:** ຢາເມັດສີເຫຼືອງອ່ອນ.
**ວັນໝົດອາຍຸ** : 24 ເດືອນ ຫຼັງຈາກວັນທີຜະລິດ.
**ຂະໜາດບັນຈຸ:** ບັນຈຸໃນກັບ, 1 ກັບມີ 20 ແຜງ, 1 ແຜງມີ 10 ເມັດ.
**ການເກັບຮັກສາ:**
- ເກັບຮັກສາໃນກັບກ່ອງເດີມປິດສະນິດ ປ້ອງກັນບໍ່ໃຫ້ຖືກແສງແດດໂດຍກົງ.
- ເກັບຮັກສາຢາ ຫ່າງໄກຈາກມືເດັກ.

**ຜະລິດໂດຍ:**
ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com